# ອານາຄົດຂອງການໄປສະນີ ໃນການເຮັດວຽກກັບຜູ້ມີສ່ວນຮ່ວມໃນຂົງເຂດໄປສະນີ

ສະຫະພາບໄປສະນີສາກົນ ໄດ້ເປີດໂຕໂຄງການລິເລີ່ມທີ່ກ້າວລ້ຳ ຊຶ່ງເອີ້ນວ່າ: "ກຽມພ້ອມເຂົ້າສູ່ກຸ່ມຕະຫຼາດທີ່ສາມາດເຮັດວຽກຮ່ວມກັນໄດ້ **(Ready to Market Interoperability Group: RMIG)**", ຊຶ່ງແມ່ນການເສີມສ້າງຄວາມຮ່ວມມືລະຫວ່າງຜູ້ປະກອບການໄປສະນີ **(Designated Operators: DOs)** ແລະ ຜູ້ມີສ່ວນຮ່ວມໃນພາກໄປສະນີ **(wider postal sector players: WPSPs)** ເພື່ອສະໜັບສະໜູນການເຕີບໂຕ ນະວັດຕະກຳ ແລະ ຄວາມຍືນຍົງ ໃນລະບົບນິເວດໄປສະນີ ພ້ອມທັງຕອບສະໜອງຄວາມຕ້ອງການໂດຍກົງຂອງລູກຄ້າ.

ສະຫະພາບໄປສະນີສາກົນ ຈະບຸກເບີກແນວທາງໃໝ່ ໃນການໃຫ້ທຶນ ແລະຄວາມຮ່ວມມືໃນການປະຕິບັດງານຜ່ານໜ່ວຍງານຕ່າງໆທີ່ໄດ້ຮັບທຶນສະໜັບສະໜູນຈາກ WPSPs ເພື່ອໃຫ້ແນ່ໃຈວ່າບໍລິການທີ່ຈຳເປັນຈະປະສົບຜົນສຳເລັດໄປພ້ອມໆກັນກັບການເພີ່ມຄວາມເປັນອິດສະລະທາງການເງິນ, ໂດຍລວມແລ້ວ RMIG ຈະກຳນົດອານາຄົດຂອງການເຮັດວຽກຮ່ວມກັນທາງໄປສະນີ ແລະເປີດໂອກາດໃຫ້ (WPSPs) ຜູ້ມີສ່ວນໄດ້ເສຍຂະຫຍາຍກວ້າງຫຼາຍຂຶ້ນ.

"ຈຸດປະສົງຫຼັກຂອງ RMIG ຄືການພັດທະນາໂປຼແກຼມທີ່ກ້າວໜ້າ ທີ່ຈະສ້າງໂອກາດທາງທຸລະກິດ ທີ່ຫຼາຍຂຶ້ນໃນກຸ່ມຕ່າງໆ ທີ່ເຂົ້າຮ່ວມ ແລະເອົາໃຈໃສ່ຕໍ່ຄວາມຕ້ອງການຂອງລູກຄ້າ" ຊຶ່ງ RMIG ຈະຊ່ວຍໃຫ້ຜູ້ມີສ່ວນກ່ຽວຂ້ອງພັດທະນາ ແລະຈັດຕັ້ງປະຕິບັດຮູບແບບການເຮັດວຽກຮ່ວມກັນຢ່າງມີປະສິດທິພາບ, ການເຊື່ອມໂຍງໂປຼແກຼມຕ່າງໆ (APIs), ໂຄງສ້າງພື້ນຖານທີ່ສະໜັບສະໜູນການເຕີບໂຕ.

ເພື່ອໃຫ້ມີສິດເຂົ້າຮ່ວມ RMIG ຜູ້ທີ່ໄດ້ຮັບຜົນປະໂຫຍດທຸກຝ່າຍ (WPSPs) ຈະຕ້ອງໄດ້ຮັບອະນຸຍາດດຳເນີນທຸລະກິດດ້ານໄປສະນີຢ່າງຖືກຕ້ອງ ຫຼື ເປັນສະມາຊິກສະພາທີ່ປຶກສາ (CC ) ຂອງສະຫະພາບໄປສະນີສາກົນ ຊຶ່ງເປັນຕົວແທນຜົນປະໂຫຍດຂອງພາກໄປສະນີ ແລະສະໜອງການໃຫ້ຄຳປຶກສາຫາລື ທີ່ມີປະສິດທິພາບລະຫວ່າງຜູ້ມີສ່ວນໄດ້ເສຍ.

ປະຈຸບັນສະຫະພາບໄປສະນີສາກົນໄດ້ດຳເນີນການສະໜັບສະໜູນໂຄງການເພື່ອດຶງດູດ "ກຸ່ມສະມາຊິກ" ຕ່າງໆ ກ່ອນການປະຊຸມສະພາປະຕິບັດການ (POC) ແລະສະພາບໍລິຫານ (CA) ໃນເດືອນ ຕຸລາ 2024 ນີ້ ເພື່ອເລີ່ມຕົ້ນພັດທະນາຂໍ້ລິເລີ່ມຂອງກຸ່ມ.

ການເຂົ້າຮ່ວມກຸ່ມ RMIG ມີປະໂຫຍດຫຼາຍປະການ ຄື ການເຂົ້າເຖິງເຄື່ອງມືສະເພາະທາງ ແລະເຂົ້າຮ່ວມພັດທະນາເຄື່ອງມືຕ່າງໆຂອງກຸ່ມ. RMIG ເປັນອົງກອນທີ່ຂັບເຄື່ອນໃນການແບ່ງປັນຄວາມຮູ້, ສະໜອງແຜລດຟອມໃນການແບ່ງປັນປະສົບການ ແລະແນວທາງປະຕິບັດທີ່ດີທີ່ສຸດ ເພື່ອສ້າງການນຳສະເໜີຄຸນຄ່າທີ່ບໍ່ຄືໃຜ.

ໃນອີກ 2 ປີຂ້າງໜ້າເປັນທີ່ຄາດການວ່າຄວາມຮ່ວມມືຂອງ RMIG ລະຫວ່າງຜູ້ປະກອບການໄປສະນີ (Dos) ແລະ ສະມາຊິກຂອງສະພາທີ່ປຶກສາ (CC) ຈະນຳໄປສູ່ການເພີ່ມບໍລິມາດບໍລິການຂອງສະຫະພາບໄປສະນີສາກົນ ໃນທຸກຂົງເຂດ ແລະທົ່ວໂລກ ເພື່ອສະໜອງຄວາມຕ້ອງການຂອງລູກຄ້າໃໝ່, ຊຶ່ງນີ້ຈະເປັນການເປີດທ່າແຮງໃໝ່ໃຫ້ແກ່ບັນດາສະມາຊິກ ໂດຍສະເພາະແມ່ນບັນດາປະເທດພວມພັດທະນາ, ເປີດກວ້າງການຮ່ວມມືລະຫວ່າງພາກສ່ວນຕ່າງໆທີ່ກ່ຽວຂ້ອງ, ເປີດກວ້າງທ່າແຮງຂອງຕະຫຼາດ ແລະຊຸກຍູ້ການພັດທະນາເຄືອຂ່າຍໄປສະນີ.

ຂຽນໂດຍ: ປະສິດ ສີສົມບູນ, ຮອງຫົວໜ້າກົມໄປສະນີ
ຂໍ້ມູນຈາກ: https://www.upu.int/